**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ນາຍົກລັດຖະມົນຕີ ເລກທີ 08 / ນຍ.

ນະຄອນຫລວງວຽງຈັນ, ວັນທີ 19.05.2017

## ຄຳສັ່ງ

## ວ່າດ້ວຍການປ້ອງກັນ ແລະ ສະກັດກັ້ນ ການລະບາດ ຂອງພະຍາດໄຂ້ຍຸງລາຍ ໃນປີ 2017

ເຖິງ : - ບັນດາທ່ານລັດຖະມົນຕີກະຊວງ ແລະ ຫົວໜ້າອົງການທຽບເທົ່າກະຊວງ.

- ທ່ານເຈົ້າຄອງນະຄອນຫລວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງໃນຂອບເຂດທົ່ວປະເທດ.

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມການລາຍງານ ແລະ ຕິດຕາມທ່າອ່ຽງ ໃນວຽກງານເຝົ້າລະວັງ ກໍລະນີພະຍາດໄຂ້ຍຸງ ແມ່ນອາດມີການລະບາດແຕ່ທົ່ວປີ ຄ້າຍຄື ປີ 2013.

ເນື່ອງຈາກສະພາບການປ່ຽນແປງດິນຟ້າອາກາດ ເຮັດໃຫ້ສິ່ງແວດລ້ອມ ເອື້ອອຳນວຍໃຫ້ແກ່ການຂະຫຍາຍຕົວຂອງພະຍາດໄຂ້ຍຸງລາຍ, ການເຄື່ອນຍ້າຍຂອງປະຊາກອນທັງພາຍໃນ ແລະ ພາກພື້ນ ມີທ່າອ່ຽງເພີ່ມຂຶ້ນ ເປັນໂອກາດໃຫ້ເຊື້ອຈຸລະໂລກມີການເຄື່ອນຍ້າຍ ອັນເປັນສາເຫດເຮັດໃຫ້ເກີດການລະບາດ ຂອງພະຍາດໄຂ້ຍຸງລາຍທີ່ສູງຂຶ້ນ ແລະ ອີງໃສ່ການຕິດຕາມທ່າອ່ຽງການລະບາດ ພົບກໍລະນີເປັນພະຍາດໄຂ້ຍຸງລາຍ ແລະ ການພົບຂອງສາຍພັນເຊື້ອພະຍາດໄຂ້ຍຸງລາຍໃນຂອບເຂດທົ່ວປະເທດ ບົ່ງບອກຄວາມສ່ຽງໃນການເກີດລະບາດ.

ເພື່ອເຮັດໃຫ້ບັນຫາດັ່ງກ່າວໄດ້ຮັບການແກ້ໄຂຢ່າງທັນການ ແລະ ໄດ້ຮັບຜົນດີ, ບັນດາອົງການຈັດຕັ້ງພາກລັດ ແລະ ເອກະຊົນ ມີສ່ວນຮ່ວມ ແລະ ປະກອບສ່ວນເຂົ້າໃນຂະບວນການກຽມພ້ອມຕອບໂຕ້ຕໍ່ການລະບາດ ຂອງພະຍາດໄຂ້ຍຸງລາຍ ໃນປີ 2017.

## ນາຍົກລັດຖະມົນຕີ ອອກຄຳສັ່ງ

1. ໃຫ້ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ສືບຕໍ່ຊີ້ນຳຂະແໜງການຂອງຕົນ ເປັນຕົ້ນ ກົມ, ສູນ, ໂຮງໝໍສູນກາງ, ຊ່ວງຊານປິ່ນປົວ, ມະຫາວິທະຍາໄລ, ໂຮງຮຽນລັດ-ເອກະຊົນ ລົງສົມທົບ ແຂວງ, ນະຄອນຫລວງວຽງຈັນ ສ້າງແຜນການກຽມພ້ອມ ແລະ ຮັບປະກັນແຕ່ຫົວທີ ໃຫ້ແກ່ວຽກງານລະບາດວິທະຍາ, ປິ່ນປົວ, ຄຸ້ມຄອງ ແລະ ໂຄສະນາ ໃຫ້ຄວາມຮູ້ແກ່ຊຸມຊົນ ແລະ ວຽກງານ ແກ້ໄຂການລະບາດຂອງພະຍາດໄຂ້ຍຸງລາຍ ຢ່າງທັນການ, ເພື່ອປ້ອງກັນ ແລະ ສະກັດກັ້ນ ການລະບາດຂອງພະຍາດໄຂ້ຍຸງລາຍ ນັບແຕ່ຕົ້ນປີ 2017 ເປັນຕົ້ນໄປ, ໂດຍປະຕິບັດທິດທາງ 3 ສ້າງ ເອົາແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ບ້ານເປັນຫົວໜ່ວຍພັດທະນາ;

2. ໃຫ້ທ່ານເຈົ້າຄອງນະຄອນຫລວງວຽງຈັນ, ບັນດາທ່ານເຈົ້າແຂວງ ແລະ ເຈົ້າເມືອງ ໂດຍສະເພາະຄະນະກຳມະການຕ້ານ ແລະ ຄວບຄຸມພະຍາດຕິດຕໍ່ໃນແຕ່ລະຂັ້ນ ຜັນຂະຫຍາຍຊີ້ນຳ ແລະ ອຳນວຍຄວາມສະດວກໃຫ້ແກ່ອົງການຈັດຕັ້ງທຸກພາກສ່ວນພາຍໃນແຂວງ, ເມືອງ ແລະ ບ້ານຂອງຕົນ, ເພື່ອເຂົ້າຮ່ວມຂະບວນການແກ້ໄຂບັນຫາດັ່ງກ່າວ ແຕ່ຫົວທີ ແລະ ດ້ວຍຄວາມຮັບຜິດຊອບສູງ;
3. ສືບຕໍ່ຈັດຕັ້ງໃຫ້ມີອາສາສະໝັກບ້ານ, ທະຫານ, ຕຳຫຼວດ, ນັກຮຽນ ແລະ ນັກສຶກສາ ທຸກພາກສ່ວນ ເຂົ້າຮ່ວມສ້າງຂະບວນການ ເພື່ອສຳຫຼວດ ແລະ ຕິດຕາມ ຄວາມໜາແໜ້ນຂອງໜອນນ້ຳຍຸງລາຍ ພ້ອມທັງທຳລາຍແຫຼ່ງເພາະຍຸງລາຍ ຢ່າງເປັນປົກກະຕິ, ຮັບປະກັນໃຫ້ປະຊາຊົນມີການປ່ຽນແປງພຶດຕິກຳ ໂດຍປະຕິບັດຕາມຄຳຂວັນ 5 ປໍ ຄື: 1. **ປິດ**ຝາພາຊະນະນຳໃຊ້ໃນເຮືອນ ແລະ ນອກເຮືອນ ເພື່ອບໍ່ໃຫ້ຍຸງມາໄຂ່ໃສ່, 2. **ປ່ຽນ**ນ້ຳໃນພາຊະນະ ເຊັ່ນ: ເຕົ້າດອກໄມ້, ນ້ຳຮອງຕີນຕູ້, ຖານຮອງຈອກນ້ຳ, 3. **ປ່ອຍປາ**ກິນຍຸງ ເພື່ອກິນໜອນນ້ຳຍຸງລາຍ, 4. **ປັບປຸງ**ໂດຍການອະນາໄມສິ່ງແວດລ້ອມອ້ອມເຮືອນ ບໍ່ໃຫ້ມີກະໂປະ, ກະປ໋ອງ ແລະ ຢາງຕີນລົດທີ່ມີນ້ຳຂັງ, 5. **ປະຕິບັດ** ໃຫ້ເປັນນິໄສເປັນປະຈຳທຸກໆອາທິດ;
4. ເພື່ອຮັບປະກັນໃຫ້ການຊີ້ນຳ-ນຳພາ ແລະ ຈັດຕັ້ງປະຕິບັດວຽກງານປ້ອງກັນການລະບາດຂອງພະຍາດໄຂ້ຍຸງລາຍ ໃຫ້ມີປະສິດທິຜົນນັ້ນ, ເຈົ້າຄອງນະຄອນຫລວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງໃນຂອງເຂດທົ່ວປະເທດ ຜັນຂະຫຍາຍການແຕ່ງຕັ້ງຄະນະຮັບຜິດຊອບທີ່ຜ່ານມາໃນແຕ່ລະເມືອງ ແລະ ໃຫ້ເຈົ້າເມືອງເປັນປະທານ ໃນວຽກງານປ້ອງກັນການລະບາດຂອງພະຍາດໄຂ້ຍຸງລາຍ ຢູ່ຂັ້ນບ້ານໃຫ້ເຂັ້ມແຂງກ່ວາເກົ່າ;
5. ເພື່ອສະຫຼຸບຖອດຖອນ ການປະຕິບັດວຽກງານການປ້ອງກັນ ແລະ ຄວບຄຸມພະຍາດໄຂ້ຍຸງລາຍ ໃນແຕ່ລະຂັ້ນ ສືບຕໍ່ໃຫ້ມີການຈັດກອງປະຊຸມດັ່ງກ່າວ:
   - ຂັ້ນນະຄອນຫລວງວຽງຈັນ ແລະ ແຂວງ ຈັດກອງປະຊຸມ ທຸກໆ 3 ເດືອນ;
   - ຂັ້ນເມືອງ ຈັດກອງປະຊຸມ ທຸກໆ 1 ເດືອນ;
   - ຂັ້ນບ້ານ ຈັດກອງປະຊຸມ ທຸກໆອາທິດ;

   ກອງປະຊຸມດັ່ງກ່າວ ຕ້ອງມີຂະແໜງການກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງກັນ ແລ້ວລາຍງານໃຫ້ກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ ຮັບຮູ້ນຳ ເພື່ອຈະໄດ້ແກ້ໄຂບັນຫາໃຫ້ທັນເວລາ;
6. ໃຫ້ທຸກພາກສ່ວນ, ຂະແໜງການ ແລະ ອົງການຈັດຕັ້ງອື່ນໆ ຈົ່ງໄດ້ພ້ອມກັນເອົາໃຈໃສ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ;
7. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ